ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 014 /ທຄຕລ...2020...
ນະຄອນຫຼວງວຽງຈັນ, ວັນທີ: 19 FEB 2020

**ເຖິງ** : ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນປະມູນສະເໜີລາຄາວຽກງານຕົບແຕ່ງໜ່ວຍບໍລິການ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງສະເໜີລາຄາປະເມີນວຽກຕົບແຕ່ງໜ່ວຍບໍລິການ ທຄຕລ ຈຳນວນ 2 ໜ່ວຍຄື:

- ໜ່ວຍບໍລິການບ້ານໄຊ່ປາກງື່ມ ຕັ້ງຢູ່ ບ້ານໄຊ່, ເມືອງປາກງື່ມ ນະຄອນຫຼວງວຽງຈັນ.
- ໜ່ວຍບໍລິການ ວຽງໄຊ ຕັ້ງຢູ່ ບ້ານນາໄກ່, ເມືອງວຽງໄຊ, ແຂວງຫົວພັນ

1. ບໍລິສັດ ສາມາດພົວພັນເອົາເອກະສານປະມູນ ເລີ່ມວັນທີ 20/02/2020, ເວລາ 08:30 - 16:30 ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ເກັບຄ່າທຳນຽມເອກະສານ ຈຳນວນເງິນ 250.000 ກີບ, ລາຍລະອຽດເອກກະສານປະກອບມີດັ່ງນີ້:
   ກ. ແບບຟອມການຍື່ນຊອງປະມູນ.
   ຂ. ໃບປະເມີນລາຄາ 1 ຊຸດ.
   ຄ. ແບບຕົບແຕ່ງ 1 ຊຸດ.

2. ບໍລິສັດທີ່ສະເໜີຍື່ນຊອງເພື່ອເຂົ້າປະມູນແຂ່ງຂັນ ຕ້ອງມີປະສົບການສາມາດຕົບແຕ່ງທະນາຄານທຸກດ້ານ ແລະ ທີມງານທີ່ມີສີມື.

3. ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບເຕັກນິກການຕົບແຕ່ງກ່ອນການຍື່ນຊອງ ຈາກວັນທີ 20/02/2020 - 18/03/2020, ໃນຊ່ວງເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

4. ການຍື່ນຊອງປະມູນແຍກເປັນ 2 ຊອງ:
   - ຊອງເອກະສານທາງດ້ານເຕັກນິກປະສົບການຜົນງານ, ຖານະການເງິນ ແລະ ບຸກຄະລາກອນ (ຕາມແບບຟອມຄັດຕິດມາພ້ອມ);
   - ຊອງສະເໜີລາຄາ, ມູນຄ່າ ຕາມລາຍການໃນ BOQ.

5. ຍື່ນເອກະສານສະເໜີລາຄາ ພ້ອມທັງເອກະສານດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານອື່ນໆ (ຕົ້ນສະບັບ) ມາຍັງພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ກ່ອນວັນທີ 18/03/2020 ແລະ ຈະປິດຮັບຊອງກ່ອນເວລາ 09:00 ໂມງ ຂອງວັນດຽວກັນ.

6. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈະທຳການປະເມີນຄັດເລືອກບໍລິສັດຮັບເໝົາຕົບແຕ່ງດ້ວຍວິທີຮູບແບບການປະມູນເປີດກ້ວາງ ພາຍຫຼັງສຳເລັດການຄັດເລືອກ ທຄຕລ ຈະແຈ້ງບໍລິສັດ ທີ່ສົ່ງຊອງປະມູນຮັບຊາບ.


ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**<u>ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:</u>**

**<u>ຊອງທີ 1:</u>**

ກ. ໃບທະບຽນວິສາຫະກິດ

ຂ. ໃບອະນຸຍາດດຳເນີນທຸລະກິດປີ 2019 ຫຼື 2020

ຄ. ໃບທະບຽນອາກອນ 3 ປີຍ້ອນຫຼັງ (2017, 2018, 2019)

ງ.ໃບຢັ້ງຢືນຖານະການເງິນ ປີ 2019 (ອອກໃຫ້ໂດຍທະນາຄານ)

ຈ. ບັນຊີພາຫະນະຮັບໃຊ້ວຽກ ແລະ ອຸປະກອນຂອງບໍລິສັດ

ສ. ບັນຊີພະນັກງານຄຸ້ມຄອງ ແລະ ວິຊາການຂອງບໍລິສັດ

ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການການຕົບແຕ່ງສະເພາະທະນາຄານຢ່າງໜ້ອຍ 4 ໂຄງການ ລາຍລະອຽດຕາມແບບຟອມທີ່ຕິດຄັດດ້ານຫຼັງ.

**<u>ຊອງທີ 2:</u>**

ກ. ໃບປະເມີນລາຄາຕ້ອງເປັນສະກຸນເງິນກີບທີ່ປະກອບສຳເລັດແລ້ວ 1 ຊຸດ

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຣ ຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ